- ທະນາຄານ ລາວ-ຈີນ ຈຳກັດ (LCNB) ເປັນທຸລະກິດທີ່ດຳເນີນກ່ຽວກັບການບໍລິການດ້ານການທະນາຄານຢູ່ໃນ ສປປ ລາວ. ທະນາຄານລາວ-ຈີນ ເປັນທະນາຄານຮ່ວມທຶນກັບ ທະນາຄານ ຟູດ້ຽນ ຈີນ ເຊິ່ງແມ່ນທະນາຄານທຸລະກິດຂອງລັດທີ່ດຳເນີນການຢູ່ປະເທດຈີນ. LCNB ດຳເນີນທຸລະກິດ ພາຍໃຕ້ໃບທະບຽນການທະນາຄານ ລົງວັນທີ 20 ມັງກອນ 2014 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນປີ 2024, LCNB ເພີ່ມທຶນຈາກ 1,229 ຮຸ້ນເປັນ 1,563 ຮຸ້ນ ແຕ່ BCEL ໄດ້ຍິນຍອມທີ່ຈະຮັກສາອັດຕາສ່ວນຄວາມເປັນເຈົ້າຂອງເດີມ 490 ຮຸ້ນ ແລະ ບໍ່ມີການຊຳລະເພີ່ມເຕີມສຳລັບການເພີ່ມທຶນດັ່ງກ່າວ ເຮັດໃຫ້ອັດຕາສ່ວນຮ້ອຍການຄວາມເປັນເຈົ້າຂອງຂອງ BCEL ຫຼຸດລົງຈາກ 39.87% ເປັນ 31.35%. ນະວັນທີ 31 ມີນາ 2026, ມູນຄ່າການລົງທຶນທັງໝົດແມ່ນ 157,723 ລ້ານກີບ.

- ທະນາຄານ ລາວ-ຝຣັ່ງ ຈຳກັດ (BFL) ເປັນທຸລະກິດໜຶ່ງທີ່ໄດ້ຈົດທະບຽນຢູ່ ສປປ ລາວ ເຊິ່ງມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫຼວງວຽງຈັນ ແລະ ສະໜອງການບໍລິການທາງດ້ານການທະນາຄານ. ທະນາຄານ ລາວ-ຝຣັ່ງ ຖືກສ້າງຂຶ້ນໂດຍໄດ້ຮ່ວມທຶນກັບ Cofibred Company Frances De La Bred ເຊິ່ງເປັນທະນາຄານທຸລະກິດລັດ ທີ່ດຳເນີນທຸລະກິດຢູ່ປາຣີ, ປະເທດ ຝຣັ່ງ. BFL ດຳເນີນທຸລະກິດພາຍໃຕ້ໃບອະນຸຍາດລົງທຶນ ການທະນາຄານຊົ່ວຄາວ ລົງວັນທີ 01 ຕຸລາ 2009 ແລະ ໃບອະນຸຍາດຖາວອນ ລົງວັນທີ 16 ກໍລະກົດ 2010 ອອກໂດຍທະນາຄານແຫ່ງ ສປປ ລາວ. ທຶນຈົດທະບຽນຕາມກົດໝາຍຂອງທະນາຄານ BFL ແມ່ນ 20 ລ້ານໂດລາ ເຊິ່ງໄດ້ເພີ່ມເປັນ 37 ລ້ານໂດລາ, ອີງຕາມບົດບັນທຶກຂອງປະທານປະເທດອອກໃນ ວັນທີ 24 ກັນຍາ 2009 ແລະ ໜັງສືເລກທີ. 01/ທຫລ ລົງວັນທີ 28 ມັງກອນ 2010 ຈາກ ທຫລ. ໃນວັນທີ 31 ມີນາ ປີ 2026, ມູນຄ່າການປະກອບສ່ວນຂອງທະນາຄານໃນບໍລິສັດນີ້ແມ່ນ 150,000 ລ້ານກີບ (2025: 150,000 ລ້ານກີບ).

### 16. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ (ຕໍ່)

- ບໍລິສັດ ລາວເນເຊີນນໍ ເພເມັ້ນ ເນັດເວີກ ຈໍາກັດ (LAPNet) ແມ່ນເປັນບໍລິສັດໜຶ່ງທີ່ສ້າງຕັ້ງໃນ ສປປ ລາວ ພາຍໃຕ້ໃບທະບຽນວິສາຫະກິດ ເລກທີ 0349 ອອກໂດຍ ກົມຄຸ້ມຄອງທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ລົງວັນທີ 12 ມີນາ 2019 ເຊິ່ງໃຫ້ບໍລິການທາງການເງິນ. ເປັນການຮ່ວມມືລະຫວ່າງທະນາຄານແຫ່ງ ສປປ ລາວ, Union Pay International, ທະນາຄານພັດທະນາລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານຮ່ວມພັດທະນາ ແລະ ທະນາຄານລາວ-ຫວຽດ. ບໍລິສັດມີທຶນຈົດທະບຽນ ມູນຄ່າ 34,000 ລ້ານກີບ. ໃນວັນທີ 31 ມີນາ 2026, ການປະກອບທຶນທັງໝົດຂອງທະນາຄານໃນບໍລິສັດນີ້ມີ ຈຳນວນ 6,800 ລ້ານກີບ (2025: 6,800 ລ້ານກີບ).

- ບໍລິສັດ ຕະຫຼາດແລກປ່ຽນເງິນຕາຕ່າງປະເທດລາວ ຈຳກັດ (ຕລຕ) (LFX) ໄດ້ສ້າງຕັ້ງຢູ່ໃນ ສປປ ລາວ ພາຍໃຕ້ ໃບທະບຽນວິສາຫະກິດ ສະບັບເລກທີ 4016 ທີ່ອອກໂດຍກົມທະບຽນວິສາຫະກິດ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ລົງວັນທີ 22 ຕຸລາ 2024 ແລະ ດຳເນີນທຸລະກິດດ້ານການບໍລິການດ້ານການເງິນ, ເປັນສະມາຄົມລະຫວ່າງທະນາຄານແຫ່ງ ສປປ ລາວ, ທະນາຄານສົ່ງເສີມກະສິກຳ, ທະນາຄານ ເອັສທີ ຈຳກັດ, ທະນາຄານ ອິນດູຈີນ, ທະນາຄານ ລາວ - ຝຣັ່ງ ຈຳກັດ, ທະນາຄານ ພັດທະນາລາວ ຈຳກັດ, ທະນາຄານ ພົງສະຫວັນ, ທະນາຄານ ມາຣູຮານ ເຈແປນ ລາວ. ທຶນຈົດທະບຽນ ຕາມກົດໝາຍແມ່ນ 20,000 ລ້ານກີບ. ນະວັນທີ 31 ມີນາ 2026, ທຶນຈົດທະບຽນປະກອບແລ້ວຂອງທະນາຄານໃນບໍລິສັດນີ້ແມ່ນ 2,000 ລ້ານກີບ (2025: 2,000 ລ້ານກີບ).

## 17. ຊັບສົມບັດຄົງທີ່ ແລະ ອຸປະກອນ

| | ສິ່ງກໍ່ສ້າງກຳລັງດຳເນີນ ແລະ ຊັບສົມບັດຄົງທີ່ພວມເຄື່ອນຍ້າຍ ລ້ານກີບ | ອາຄານ ແລະ ສ່ອມປັບປຸງ ລ້ານກີບ | ອຸປະກອນຫ້ອງການ ລ້ານກີບ | ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ | ພາຫະນະ ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|---|---|
| **ໃນວັນທີ 1 ມັງກອນ 2026 - ກວດສອບ** | | | | | | |
| ຕົ້ນທຶນ | 238,990 | 585,791 | 536,220 | 41,504 | 76,935 | 1,479,440 |
| ຫັກ : ຄ່າຫຼຸ້ຍຫ້ຽນສະສົມ | - | (327,363) | (334,582) | (34,446) | (30,867) | (727,258) |
| **ມູນຄ່າຕາມບັນຊີສຸດທິ** | **238,990** | **258,428** | **201,637** | **7,058** | **46,069** | **752,182** |
| **ສຳລັບໄລຍະສາມເດືອນ ຂອງໄຕມາດທີ \| ສິ້ນສຸດວັນທີ 31 ມີນາ 2026** | | | | | | |
| ຍອດຍົກມາຂອງມູນຄ່າຕາມບັນຊີສຸດທິ | 238,990 | 258,428 | 201,637 | 7,058 | 46,069 | 752,182 |
| ຊື້ເພີ່ມໃໝ່ | 34,507 | 249 | 330 | 157 | - | 35,245 |
| ໂອນເຂົ້າ/(ອອກ) | (15,993) | 8,166 | 4,939 | 522 | - | (2,366) |
| ຫັກ : ຄ່າຫຼຸ້ຍຫ້ຽນສະສົມ | - | (8,163) | (16,376) | (743) | (2,661) | (27,944) |
| **ຍອດເຫຼືອມູນຄ່າຕາມບັນຊີສຸດທິ - ກ່ອນການກວດສອບ** | **257,503** | **258,679** | **190,531** | **6,995** | **43,408** | **757,117** |
| **ໃນວັນທີ 31 ມີນາ 2026** | | | | | | |
| ຕົ້ນທຶນ | 257,503 | 594,206 | 541,490 | 42,184 | 76,935 | 1,152,318 |
| ຫັກ : ຄ່າຫຼຸ້ຍຫ້ຽນສະສົມ | - | (335,527) | (350,959) | (35,189) | (33,527) | (755,201) |
| **ມູນຄ່າຕາມບັນຊີສຸດທິ - ກ່ອນການກວດສອບ** | **257,503** | **258,679** | **190,531** | **6,995** | **43,408** | **757,117** |

## 18. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

| | ຊັບສິນບັດຄົງທີ່ບໍ່ມີຕົວຕົນພວມດຳເນີນການ ລ້ານກີບ | ສິດນຳໃຊ້ທີ່ດິນ ລ້ານກີບ | ຊັອບແວ ລ້ານກີບ | ລວມ ລ້ານກີບ |
|---|---|---|---|---|
| **ໃນວັນທີ 1 ມັງກອນ 2026 - ກວດສອບ** | | | | |
| ຕົ້ນທຶນ | 42,639 | 300,476 | 106,001 | 449,113 |
| ຄ່າເສື່ອມສະສົມ | - | - | (64,038) | (64,039) |
| **ມູນຄ່າຕາມບັນຊີສຸດທິ** | **42,639** | **300,476** | **41,962** | **385,077** |
| **ສຳລັບໄລຍະສາມເດືອນຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026** | | | | |
| ຍອດຍົກມາຂອງມູນຄ່າຕາມບັນຊີສຸດທິ | 42,639 | 300,476 | 41,962 | 385,077 |
| ຊື້ເພີ່ມໃໝ່ | - | - | - | - |
| ໂອນເຂົ້າ/(ອອກ) | (702) | (702) | - | - |
| ຄ່າເສື່ອມພາຍໃນປີ | - | - | (4,719) | (4,719) |
| **ໃນວັນທີ 31 ມີນາ 2026 - ກ່ອນການກວດສອບ** | **41,937** | **301,178** | **37,243** | **380,358** |
| **ໃນວັນທີ 31 ມີນາ 2026** | | | | |
| ຕົ້ນທຶນ | 41,937 | 301,178 | 106,001 | 449,114 |
| ຄ່າເສື່ອມສະສົມ | - | - | (68,757) | (68,757) |
| **ມູນຄ່າຕາມບັນຊີສຸດທິ - ກ່ອນການກວດສອບ** | **41,937** | **301,178** | **37,244** | **380,358** |

## 19. ສິດໃນການນຳໃຊ້ຊັບສິນ

ການເຄື່ອນໄຫວ ຂອງສິດໃນການນຳໃຊ້ຊັບສິນ ສຳລັບໄລຍະ ມີດັ່ງລຸ່ມນີ້:

| | ລ້ານກີບ |
|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2026 - ກວດສອບ** | **76,751** |
| ເພີ່ມຂຶ້ນ* | 1,575 |
| ສະສາງອອກ | - |
| ຄ່າຫຼຸ້ຍຫ້ຽນ | (6,387) |
| **ຍອດເຫຼືອ ໃນວັນທີ 31 ມີນາ 2026 - ກ່ອນການກວດສອບ** | **71,939** |

* ການເພີ່ມຂຶ້ນຂອງສິນຊັບສິດໃນການນຳໃຊ້ໃນໄລຍະນີ້ສ່ວນໃຫຍ່ ແມ່ນຍ້ອນການຮັບຮູ້ສັນຍາເຊົ່າສຳລັບອາຄານທີ່ໄດ້ເຊົ່າເພື່ອຮອງຮັບໜ່ວຍງານບໍລິການ.

## 20. ຊັບສິນອື່ນໆ

| | **ກ່ອນການກວດສອບ 31 ມີນາ 2026 ລ້ານກີບ** | **ກວດສອບ 31 ທັນວາ 2025 ລ້ານກີບ** |
|---|---|---|
| ຊັບສິນມີໄວ້ເພື່ອຂາຍ (i) | 2,947,328 | 2,950,251 |
| ຊັບສິນອື່ນໆທີ່ລໍຖ້າໂອນບັນຊີ ຫຼື ສະສາງ(ii) | 570,548 | 930,993 |
| ເງິນລ່ວງໜ້າສຳລັບການຕື່ມເງິນ (iii) | 123,273 | 155,990 |
| ເຄື່ອງໃຊ້ຫ້ອງການ ແລະ ອຸປະກອນອື່ນໆ | 22,236 | 25,261 |
| ລາຍຈ່າຍລ່ວງໜ້າແບ່ງສ່ວນຈ່າຍ | 54,556 | 21,715 |
| ອາກອນລ່ວງໜ້າ | - | 27,130 |
| ເງິນຈ່າຍລ່ວງໜ້າສຳລັບຜູ້ສະໜອງ | 73,409 | 68,641 |
| ອື່ນໆ | 178,859 | 175,547 |
| | **3,970,210** | **4,355,528** |

(i) ສິນຊັບທີ່ມີໄວ້ເພື່ອຂາຍ ປະກອບມີ ຊັບສິນທີ່ຖືກໂອນຈາກລູກຄ້າໃຫ້ທະນາຄານ ເພື່ອປະຕິບັດພັນທະໜີ້ເງິນກູ້ຂອງພວກເຂົາ.

(ii) ສິນຊັບອື່ນໆທີ່ກຳລັງລໍຖ້າການໂອນບັນຊີ ຫຼື ການຊຳລະສະສາງ ສະແດງເຖິງບັນຊີລູກໜີ້ ທີ່ໄດ້ຖືກລິເລີ່ມແລ້ວ ແຕ່ຍັງບໍ່ທັນໄດ້ຮັບການຊຳລະສະສາງ ໂດຍຫຼັກໆ ແມ່ນຈາກການໂອນເງິນລະຫວ່າງທະນາຄານ ແລະ ທຸລະກຳຜ່ານບັດທີ່ດຳເນີນການຜ່ານເຄືອຂ່າຍການຊຳລະເງິນ. ການຊຳລະສະສາງຂັ້ນສຸດທ້າຍແມ່ນກຳລັງລໍຖ້າກວດສອບຍອດຢ່າງຄົບຖ້ວນລະຫວ່າງຄູ່ສັນຍາທີ່ກ່ຽວຂ້ອງ ໂດຍປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້.

(iii) ເງິນລ່ວງໜ້າສຳລັບການຕື່ມເງິນ ໝາຍເຖິງ ການຈ່າຍເງິນລ່ວງໜ້າ ເພື່ອຊື້ມູນຄ່າການໂທຂອງເຄືອຂ່າຍໂທລະສັບ ເພື່ອຈຸດປະສົງໃນການໃຫ້ບໍລິການເຕີມເງິນແກ່ລູກຄ້າຂອງທະນາຄານ.

## 21. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ

| | **ກ່ອນການກວດສອບ 31 ມີນາ 2026 ລ້ານກີບ** | **ກວດສອບ 31 ທັນວາ 2025 ລ້ານກີບ** |
|---|---|---|
| **ເງິນຝາກກະແສລາຍວັນ** | **3,671,107** | **5,575,482** |
| - ເປັນເງິນກີບ | 1,908,179 | 2,292,609 |
| - ເປັນເງິນຕາຕ່າງປະເທດ | 1,762,928 | 3,282,873 |
| **ເງິນຝາກປະຢັດ** | **348,542** | **314,872** |
| - ເປັນເງິນກີບ | 153,323 | 198,008 |
| - ເປັນເງິນຕາຕ່າງປະເທດ | 195,218 | 116,864 |
| **ເງິນຝາກມີກຳນົດ** | **1,103,503** | **78,141** |
| - ເປັນເງິນກີບ | 1,813 | 1,296 |
| - ເປັນເງິນຕາຕ່າງປະເທດ | 1,101,690 | 76,845 |
| **ອື່ນໆ** | **156,647** | **159,265** |
| | **5,279,799** | **6,127,760** |

## 21. ໜີ້ຕ້ອງສົ່ງໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນອື່ນ ໃນໄລຍະ ມີດັ່ງລຸ່ມນີ້:

| | **31 ມີນາ 2026**<br>**% ຕໍ່ປີ** | **31 ທັນວາ 2025**<br>**% ຕໍ່ປີ** |
|---|---|---|
| ເງິນຝາກກະແສລາຍວັນ | 0.00% - 6.00% | 0.00% - 6.00% |
| ເງິນຝາກປະຢັດ | 0.00% - 1.25% | 0.00% - 1.25% |
| ເງິນຝາກມີກຳນົດ | 1.15 – 6.00% | 1.15 – 6.00% |

## 22. ໜີ້ຕ້ອງສົ່ງໃຫ້ລູກຄ້າ

| | **ກ່ອນການກວດສອບ**<br>**31 ມີນາ 2026**<br>**ລ້ານກີບ** | **ກວດສອບ**<br>**31 ທັນວາ 2025**<br>**ລ້ານກີບ** |
|---|---|---|
| **ເງິນຝາກກະແສລາຍວັນ** | **20,724,816** | **19,764,196** |
| ເງິນຝາກກະແສລາຍວັນເປັນເງິນກີບ | 6,748,023 | 6,345,148 |
| ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ | 13,976,792 | 13,419,048 |
| **ເງິນຝາກປະຢັດ** | **90,977,832** | **89,285,544** |
| ເງິນຝາກປະຢັດເປັນເງິນກີບ | 35,311,356 | 35,972,407 |
| ເງິນຝາກປະຢັດເປັນເງິນຕາຕ່າງປະເທດ | 55,666,477 | 53,313,137 |
| **ເງິນຝາກມີກຳນົດ** | **36,630,442** | **35,766,926** |
| ເງິນຝາກມີກຳນົດເປັນເງິນກີບ | 8,804,084 | 8,979,892 |
| ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ | 27,826,358 | 26,787,034 |
| **ເງິນວາງຄ້ຳປະກັນ** | **126,704** | **62,413** |
| ເງິນວາງຄ້ຳປະກັນເປັນເງິນກີບ | 56,167 | 62,326 |
| ເງິນວາງຄ້ຳປະກັນເປັນເງິນຕາຕ່າງປະເທດ | 70,537 | 87 |
| **ໜີ້ຕ້ອງສົ່ງລູກຄ້າອື່ນໆ** | **391,407** | **628,453** |
| | **148,851,201** | **145,507,532** |

ອັດຕາດອກເບ້ຍໃນລະຫວ່າງປີສຳລັບເງິນຝາກແຕ່ລະພຶດດັ່ງກ່າວນີ້ແມ່ນ:

ເງິນຝາກປະຢັດຂອງລູກຄ້າ ລວມມີເປັນສະກຸນເງິນກີບ, ໂດລາ ແລະ ບາດ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 0.00% – 3.95%, 0.00% - 2.25% ແລະ 0.00% – 1.85% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດ ເປັນສະກຸນເງິນກີບ, ໂດລາ ແລະ ບາດ ມີກຳນົດຕັ້ງແຕ່ 3, 6, 9, 12 ເດືອນ ແລະ ຫຼາຍກວ່າ 1 ປີ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 3.16% – 7.00%, 1.35% - 7.00 % ແລະ 1.10% – 6.70% ຕໍ່ປີ ຕາມລຳດັບ.

## 23. ເງິນກູ້ຢືມຈາກທະນາຄານອື່ນ

| | ກ່ອນການກວດສອບ 31 ມີນາ 2026 ລ້ານກີບ | ກວດສອບ 31 ທັນວາ 2025 ລ້ານກີບ |
|---|---|---|
| ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ | 3,563,195 | 3,473,125 |
| ເງິນກູ້ຢືມ ອື່ນໆ | 126,640 | 126,460 |
| | **3,689,835** | **3,599,765** |

ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 31 ມີນາ 2026 ລວມມີ:

- ເງິນກູ້ໄລຍະຍາວ ທີ່ມີຍອດເຫຼືອ 97,900,000 ໂດລາ (ສະກຸນເງິນເດີມແມ່ນ 100,000,000 ໂດລາ ໂດຍມີອັດຕາດອກເບ້ຍ 5.30% ຕໍ່ປີ) ຈຸດປະສົງແມ່ນ ເພື່ອສະໜອງສິນເຊື່ອໃຫ້ໂຄງການເຂື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ. ໄລຍະເວລາຂອງສັນຍາກູ້ຢືມແມ່ນຕັ້ງແຕ່ວັນທີ 3 ພຶດສະພາ 2016 ຫາ 3 ພຶດສະພາ 2026. ດອກເບ້ຍແມ່ນຈ່າຍທຸກໆໄຕມາດ.

- ເງິນກູ້ໄລຍະຍາວຈຳນວນ 44,242,000 ໂດລາ (ຈາກວົງເງິນກູ້ຢືມເດີມ 100,000,000 ໂດລາ, ອັດຕາດອກເບ້ຍ 5.50%) ເພື່ອຈຸດປະສົງໃນການສະໜອງສິນເຊື່ອໃຫ້ແກ່ບາງໂຄງການເຂື່ອນໄຟຟ້າທີ່ໄດ້ຮັບການສະໜັບສະໜູນຈາກລັດຖະບານ. ສັນຍາກູ້ຢືມສະບັບນີ້ ເດີມມີຜົນສັກສິດນັບແຕ່ວັນທີ 27 ສິງຫາ 2015 ຫາ 27 ສິງຫາ 2025; ແຕ່ໃນໄລຍະປະຈຸບັນ, ວັນຄົບກຳນົດຕາມສັນຍາ ແມ່ນໄດ້ຖືກຕໍ່ເວລາອອກໄປຈົນເຖິງວັນທີ 27 ສິງຫາ 2026. ການຊຳລະດອກເບ້ຍແມ່ນປະຕິບັດເປັນລາຍໄຕມາດ.

- ເງິນກູ້ໄລຍະຍາວຈຳນວນ 10,050,000,000 ກີບ (ວົງເງິນກູ້ 15,050,000,000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມລະບຽບຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 3 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດໃນປີ 2025 ແມ່ນ 30%, ການຊຳລະຄືນຄັ້ງທີສອງໃນປີ 2026 30% ແລະ ການຊຳລະຄືນຄັ້ງທີສາມໃນປີ 2027 40%. ດອກເບ້ຍແມ່ນຊຳລະສອງຄັ້ງຕໍ່ປີ (ມິຖຸນາ ແລະ ທັນວາ) ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 15 ມີນາ 2021 ເຖິງ ວັນທີ 15 ມີນາ 2027.

- ເງິນກູ້ໄລຍະຍາວຈຳນວນ 110,000,000,000 ກີບ (ວົງເງິນກູ້ 110,000,000,000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ໄດ້ຮັບຜົນກະທົບຈາກ COVID-19 ອີງຕາມລະບຽບຂອງ ທຫລ ສະບັບເລກທີ 318/ທຫລ ລົງວັນທີ 19 ພຶດສະພາ 2020. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 2 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງທຳອິດ ແມ່ນ 40% ແລະການຊຳລະຄືນຄັ້ງທີສອງ 60% ໂດຍເລີ່ມຊຳລະໃນປີ 2026. ດອກເບ້ຍແມ່ນຊຳລະສອງຄັ້ງຕໍ່ປີ (ມິຖຸນາ ແລະ ທັນວາ) ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 3 ພະຈິກ 2022 ເຖິງ ວັນທີ 3 ພະຈິກ 2027.

**23. ເງິນກູ້ຢືມຈາກທະນາຄານອື່ນ (ຕໍ່)**

- ເງິນກູ້ໄລຍະຍາວຈຳນວນ 120,000,000,000 ກີບ (ວົງເງິນກູ້ 120,000,000,000 ກີບ ທີ່ມີອັດຕາດອກເບ້ຍ 3% ຕໍ່ປີ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດລົງທຶນໃນການພັດທະນາເທັກໂນໂລຊີທາງດ້ານການແພດ ແລະ ຢາ (ຈັດຊື້ອຸປະກອນໃນການຜະລິດ, ວັດຖຸດິບໃນການຜະລິດ ແລະ ພັດທະນາບຸກຄະລາກອນ ແລະ ລົງທຶນໃນການກໍ່ສ້າງໂຮງງານ). ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະເປັນ 4 ຄັ້ງ ເຊັ່ນ ການຊຳລະຄືນຄັ້ງລະ 25% ຂອງແຕ່ລະປີ ເລີ່ມຊຳລະຄັ້ງທຳອິດ ປີ 2025. ດອກເບ້ຍແມ່ນຈ່າຍທຸກໆໄຕມາດ. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 27 ທັນວາ 2021 ເຖິງ ວັນທີ 27 ທັນວາ 2028.

- ເງິນກູ້ຢືມລະຍະຍາວ ຈຳນວນ 97,524,000,000 ກີບ (ວົງເງິນສິນເຊື່ອ 106,790,000,000 ກີບ ດ້ວຍອັດຕາດອກເບ້ຍ 2.50%) ເພື່ອໃຫ້ສິນເຊື່ອແກ່ວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອສືບຕໍ່ ຫຼື ຂະຫຍາຍທຸລະກິດ. ເງິນຕົ້ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນປີ 2024 ຫາ 2029.

- ເງິນກູ້ຢືມລະຍະຍາວ ຈຳນວນ 80,450,000,000.00 ກີບ (ວົງເງິນສິນເຊື່ອ 80,450,000,000.00 ກີບ ດ້ວຍອັດຕາດອກເບ້ຍ 2.50%) ເພື່ອໃຫ້ສິນເຊື່ອແກ່ວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອສືບຕໍ່ ຫຼືຂະຫຍາຍທຸລະກິດ. ເງິນຕົ້ນຈະຖືກຊຳລະຫຼັງຈາກສິ້ນສຸດສັນຍາ. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນປີ 2025 ຫາ 2030.

ເງິນກູ້ຢືມ ອື່ນໆ ໃນວັນທີ 31 ທັນວາ 2025 ລວມມີ:

- ເງິນກູ້ໄລຍະຍາວຈຳນວນ 21,000,000,000 (ວົງເງິນກູ້ 21,000,000,000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 6 ທັນວາ 2022 ເຖິງ ວັນທີ 6 ທັນວາ 2033.

- ເງິນກູ້ໄລຍະຍາວຈຳນວນ 30,260,000,000 (ວົງເງິນກູ້ 30,260,000,000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 13 ທັນວາ 2023 ເຖິງ ວັນທີ 20 ຕຸລາ 2034.

- ເງິນກູ້ໄລຍະຍາວຈຳນວນ 11,000,000,000 (ວົງເງິນກູ້ 11,000,000,000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 28 ທັນວາ 2023 ເຖິງ ວັນທີ 8 ທັນວາ 2034.

- ເງິນກູ້ໄລຍະຍາວຈຳນວນ 64,380,000,000 (ວົງເງິນກູ້ 64,380,000,000 ກີບ ທີ່ມີບໍ່ມີອັດຕາດອກເບ້ຍ) ເພື່ອໃຫ້ ສິນເຊື່ອແກ່ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ທີ່ຖືຮຸ້ນໂດຍຄົນລາວ 100% ເພື່ອໃຫ້ສາມາດດຳເນີນທຸລະກິດຕໍ່ໄປ ແລະ ຂະຫຍາຍທຸລະກິດ. ເງິນຕົ້ນຂອງເງິນໃຫ້ກູ້ຢືມຈະຖືກຊຳລະຕອນທ້າຍໄລຍະເວລາເງິນກູ້. ໄລຍະເວລາການກູ້ຢືມແມ່ນເລີ່ມຕົ້ນວັນທີ 29 ພະຈິກ 2024 ເຖິງ ວັນທີ 29 ພະຈິກ 2035.

## 24. ອາກອນ

### 24.1 ລາຍຈ່າຍອາກອນກໍາໄລ

ອົງປະກອບສໍາຄັນຂອງລາຍຈ່າຍອາກອນ ມີດັ່ງລຸ່ມນີ້:

| | ກ່ອນການກວດສອບ<br>31 ມີນາ 2026<br>ລ້ານກີບ | ກ່ອນການກວດສອບ<br>31 ມີນາ 2025<br>ລ້ານກີບ |
|---|---|---|
| ລາຍຈ່າຍອາກອນກໍາໄລ | (76,522) | (41,430) |
| ລາຍຮັບອາກອນເຍື້ອນຊໍາລະ | (574) | 12,324 |
| **ລວມລາຍຈ່າຍອາກອນພາຍໃນປີ** | **(77,096)** | **(29,106)** |

ທະນາຄານມີພັນທະຕ້ອງຈ່າຍອາກອນກໍາໄລໃນອັດຕາ 20% (2025: 20%) ຂອງກໍາໄລກ່ອນອາກອນ ໂດຍໃຫ້ສອດຄ່ອງກັບກົດໝາຍອາກອນ.

### 24.2 ອາກອນກໍາໄລໃນປີ (“PT”)

ການຄິດໄລ່ຂອງອາກອນກໍາໄລສໍາລັບໄລຍະສາມເດືອນ ທີ່ສິ້ນສຸດວັນທີ 31 ມີນາ 2026 ແລະ 2025 ແມ່ນມີດັ່ງຕໍ່ໄປນີ້:

| | 31 ມີນາ 2026<br>ລ້ານກີບ | 31 ມີນາ 2025<br>ລ້ານກີບ |
|---|---|---|
| **ກໍາໄລກ່ອນອາກອນ** | **405,926** | **177,522** |
| *ດັດແກ້ສໍາລັບ:* | | |
| - ສ່ວນຕ່າງຂອງອາກອນຍື່ນຊໍາລະຫວ່າງ IFRS ແລະ LAS | (29,715) | 12,159 |
| **ກໍາໄລກ່ອນອາກອນຕາມເອກະສານລາຍງານການເງິນ ຂອງ ລະບຽບການ ແລະ ແຈ້ງການທີ່ກ່ຽວຂ້ອງ ຂອງ ທະນາຄານ ແຫ່ງ ສປປ ລາວ** | **376,211** | **189,681** |
| **ອັດຕາອາກອນ 20% (2025: 20%)** | **75,242** | **37,936** |
| *ເພີ່ມຂຶ້ນ/(ຫຼຸດລົງ):* | | |
| - ລາຍຮັບທີ່ຍົກເວັ້ນອາກອນກໍາໄລ | (7,945,332) | (3,059,488) |
| - ລາຍຈ່າຍທີ່ບໍ່ໃຫ້ຖືເປັນລາຍຈ່າຍ | 7,950,910 | 3,076,958 |
| - ລາຍການປັບອື່ນໆ | 164 | - |
| **ລາຍຈ່າຍອາກອນທັງໝົດໃນງວດ** | **76,522** | **41,430** |

## 24. ອາກອນກຳໄລໃນປີ (ຕໍ່)

### 24.2 ອາກອນກຳໄລໃນປີ ("PT") (ຕໍ່)

| | 31 ມີນາ 2026<br>ລ້ານກີບ | 31 ມີນາ 2025<br>ລ້ານກີບ |
|---|---|---|
| **ລາຍຈ່າຍອາກອນທັງໝົດໃນງວດ** | **76,522** | **41,430** |
| ອາກອນກຳໄລຕ້ອງຈ່າຍຕົ້ນປີ | 101,445 | 135,100 |
| ດັດແກ້ອາກອນ | (157) | |
| ຈ່າຍໃນງວດ | (79,839) | (101,082) |
| **ອາກອນຄ້າງຊຳລະໃນງວດ** | **97,970** | **75,448** |

ການແຈ້ງອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍກົມສ່ວຍສາອາກອນ. ເນື່ອງຈາກກົດໝາຍ ແລະກົດລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍປະເພດເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ຈຳນວນເງິນທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນ ສຳລັບປີອາດຈະຖືກປັບປຸງຫຼັງຈາກມື້ໄລ່ລຽງຂອງ ກົມສ່ວຍສາອາກອນ.

### 24.3 ອາກອນຊັບສິນ (ໜີ້ສິນ) ເຍື້ອນຊຳລະ

| | ໃບລາຍງານຖານະການເງິນ | | ໃບລາຍງານຜົນໄດ້ຮັບ | | ໃບລາຍງານຜົນໄດ້ຮັບສັງລວມ | |
|---|---|---|---|---|---|---|
| | 31 ມີນາ 2026<br>ລ້ານກີບ | 2025<br>ລ້ານກີບ | 31 ມີນາ 2026<br>ລ້ານກີບ | 2025<br>ລ້ານກີບ | 31 ມີນາ 2026<br>ລ້ານກີບ | 2025<br>ລ້ານກີບ |
| ອາກອນຊັບສິນເຍື້ອນຊຳລະ | 526,673 | 311,555 | 217,344 | 85,395 | (2,225) | - |
| ອາກອນໜີ້ສິນເຍື້ອນຊຳລະ | (565,453) | (258,775) | (306,678) | (51,678) | - | (3,837) |
| **ອາກອນຊັບສິນເຍື້ອນຊຳລະ,ສຸດທິ** | **(38,780)** | **52,780** | | | | |
| **ອາກອນລໍຖ້າຊຳລະສະສາງສຸດທິທີ່ຕ້ອງບັນທຶກ/ລ້າງອອກໃນໃບລາຍງານຜົນໄດ້ຮັບ** | | | **(89,334)** | **33,712** | | |
| **ອາກອນລໍຖ້າຊຳລະສະສາງສຸດທິທີ່ຕ້ອງບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບສັງລວມ** | | | | | **(2,225)** | **(3,837)** |

## 25. ໜີ້ສິນອື່ນໆ

| | ກ່ອນການກວດສອບ<br>31 ມີນາ 2026<br>ລ້ານກີບ | ກວດສອບ<br>31 ທັນວາ 2025<br>ລ້ານກີບ |
|---|---|---|
| ລາຍການລໍຖ້າສະສາງ | 810,511 | 410,954 |
| ພາລະຜູກພັນຂອງຜົນປະໂຫຍດທີ່ກຳນົດໄວ້ຫຼັງອອກການ | 114,391 | 113,968 |
| ໜີ້ຕ້ອງສົ່ງຜູ້ສະໜອງ | 141,447 | 68,183 |
| ອາກອນທີ່ຕ້ອງຈ່າຍອື່ນໆ | 54,831 | 53,739 |
| ໜີ້ຕ້ອງສົ່ງພະນັກງານ | 980 | 124,905 |
| ອື່ນໆ | 88,227 | 4,520 |
| | **1,210,390** | **776,269** |

## 26. ທຶນຈົດທະບຽນ

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 31 ມີນາ 2026 ມີດັ່ງລຸ່ມນີ້:

| **ຜູ້ຖືຮຸ້ນ** | **ຈຳນວນຮຸ້ນ** | **%** |
|---|---|---|
| ລັດຖະບານ | 926,922,633 | 60% |
| ຄູ່ຮ່ວມຮຸ້ນທາງຍຸດທະສາດ | 154,487,295 | 10% |
| ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ | 463,462,072 | 30% |
| | **1,544,872,000** | **100%** |

### 27. ຄັງສະສົມຕາມລະບຽບການ

| | ຄັງສະສົມຕາມ ລະບຽບການ ລ້ານກີບ | ຄັງຂະຫຍາຍ ທຸລະກິດ ແລະ ສຳຮອງອື່ນໆ ລ້ານກີບ | ລວມ ລ້ານກີບ |
|---|---|---|---|
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2025 - ກວດສອບ** | **268,759** | **886,069** | **1,154,828** |
| ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2024 | 54,732 | 388,720 | 443,452 |
| **ຍອດເຫຼືອ ໃນວັນທີ 31 ທັນວາ 2025 - ກວດສອບ** | **323,491** | **1,247,789** | **1,598,280** |
| | | | |
| **ຍອດເຫຼືອ ໃນວັນທີ 1 ມັງກອນ 2026 - ກວດສອບ** | **323,491** | **1,247,789** | **1,598,280** |
| ແບ່ງສ່ວນເຂົ້າຄັງສະສົມສຳລັບປີ 2025 | - | - | - |
| **ຍອດເຫຼືອ ໃນວັນທີ 31 ມີນາ 2026** | **323,491** | **1,247,789** | **1,598,280** |

ອີງຕາມກົດໝາຍວ່າ ທທລ (ສະບັບປັບປຸງ) ລົງວັນທີ 30 ສິງຫາ 2023, ມາດຕາ 67 ທີ່ກ່ຽວກັບກຳໄລ ແລະ ຂາດທຶນປະຈຳປີ, ທະນາຄານມີພັນທະຕ້ອງຈັດສັນ (ກຳໄລ) ເພື່ອຕັ້ງເປັນກອງທຶນແຮໄວ້ບັງຄັບ, ກອງທຶນຂະຫຍາຍທຸລະກິດ, ກອງທຶນແຮໄວ້ອື່ນໆ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຫຸ້ນ, ເຊິ່ງຕ້ອງໄດ້ຮັບການອະນຸມັດຈາກກອງປະຊຸມສາມັນຜູ້ຖືຫຸ້ນປະຈຳປີ.

### 28. ລາຍລະອຽດເພີ່ມເຕີມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ລວມຢູ່ໃນໃບລາຍງານກະແສເງິນສົດ ໂດຍສະແດງມູນຄ່າໃນໃບລາຍງານຖານະການເງິນ ດັ່ງລາຍລະອຽດລຸ່ມນີ້:

| | ກ່ອນການກວດສອບ 31 ມີນາ 2026 ລ້ານກີບ | ກວດສອບ 31 ທັນວາ 2025 ລ້ານກີບ |
|---|---|---|
| ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ | 6,349,388 | 5,725,690 |
| ເງິນຝາກກະແສລາຍວັນຢູ່ ທຫລ | 15,180,075 | 13,903,544 |
| ເງິນຝາກກະແສລາຍວັນ ແລະຝາກປະຢັດຢູ່ທະນາຄານອື່ນ | 12,724,924 | 15,354,613 |
| ເງິນຝາກມີກຳນົດ ພາຍໃນ 90 ວັນ | 5,308,748 | 3,379,334 |
| | **39,563,136** | **38,363,181** |

## 29. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ

| | ກ່ອນການກວດສອບ<br>31 ມີນາ 2025<br>ລ້ານກີບ | ກວດສອບ<br>31 ທັນວາ 2025<br>ລ້ານກີບ |
|---|---|---|
| ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ (ii) | 11,015,968 | 7,805,530 |
| ວົງເງິນສິນເຊື່ອໃຫ້ແກ່ທະນາຄານອື່ນ (ii) | 7,819 | 3,874 |
| ໜັງສືສິນເຊື່ອກັບທີ່ | 130,264,736 | 224,629,968 |
| ໜັງສືຄໍ້າປະກັນທາງການເງິນ (i) | 1,237,803 | 1,075,146 |
| | **142,526,327** | **223,514,518** |

### (i) ໜັງສືຄໍ້າປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄໍ້າປະກັນ (ລວມທັງໜັງສືສິນເຊື່ອເພື່ອຄໍ້າປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ. ໜັງສືຄໍ້າປະກັນ ແລະ ໜັງສືສິນເຊື່ອເພື່ອຄໍ້າປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້. ໜັງສືຄໍ້າປະກັນສາມາດເຮັດເປັນຮູບແບບໃບບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄໍ້າປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ (ລວມທັງໜັງສືສິນເຊື່ອເພື່ອຄໍ້າປະກັນ).

### (ii) ວົງເງິນສິນເຊື່ອໃຫ້ແກ່ລູກຄ້າແລະທະນາຄານອື່ນ

ບັນດາຂໍ້ຜູກພັນສໍາລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສໍາລັບເງິນກູ້ ແລະ ເງິນກູ້ໝູນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກໍານົດທີ່ໄດ້ກໍານົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ,ຂໍ້ຜູກພັນອາດຈະໝົດກໍານົດໂດຍທີ່ຍັງບໍ່ໄດ້ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈໍາເປັນຕ້ອງລາຍງານຢູ່ໃນລາຍງານກະແສເງິນສົດ. ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນແມ່ນຕໍ່າກວ່າມູນຄ່າທັງໝົດຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນໍາໃຊ້. ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອແມ່ນຄວາມບັງເອີນ ໃນເມື່ອລູກຄ້າຍັງຮັກສາມາດຕະຖານສະເພາະທີ່ໄດ້ກໍານົດໄວ້. ທະນາຄານຕິດຕາມມື້ຄົບກໍານົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາທີ່ຍາວນານ ໂດຍທົ່ວໄປແມ່ນມີລະດັບຄວາມສ່ຽງສິນເຊື່ອຫຼາຍກວ່າ ຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

## 30. ບັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວທີ່ສຳຄັນທີ່ກ່ຽວຂ້ອງກັບພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 31 ມີນາ 2026 ມີລາຍລະອຽດດັ່ງລຸ່ມນີ້:

### 1) ບໍລິສັດແມ່

ທະນາຄານຖືກຄວບຄຸມໂດຍບໍລິສັດດັ່ງລຸ່ມນີ້:

| ພາກສ່ວນທີ່ກ່ຽວຂ້ອງ | ປະເພດ | ສະຖານທີ່ປະກອບທຸລະກິດ |
|---|---|---|
| ລັດຖະບານ (ກະຊວງການເງິນ) | ບໍລິສັດແມ່ | ປະເທດລາວ |

ສ່ວນທີ່ເຫຼືອ 40% ຂອງການຖືຮຸ້ນທີ່ຖືໂດຍບຸກຄົນອື່ນ

### 2) ຍອດຄົງຄ້າງຂອງພາກສ່ວນທີ່ກ່ຽວຂ້ອງທີ່ສຳຄັນ

ຍອດຄົງຄ້າງໃນວັນທີສິ້ນສຸດງວດທີ່ໄດ້ເຮັດລາຍການກັບພາກສ່ວນທີ່ກ່ຽວຂ້ອງດັ່ງລຸ່ມນີ້:

| | ກ່ອນການກວດສອບ<br>ວັນທີ 31 ມີນາ 2026 | ກ່ອນການກວດສອບ<br>ວັນທີ 31 ມີນາ 2025 |
|---|---|---|
| **ລາຍຮັບດອກເບ້ຍ ແລະ ຄ່າຍຄິດອກເບ້ຍ** | | |
| ບໍລິສັດແມ່ | 222,055 | 216,168 |
| ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 10,597 | 22,189 |

### 3) ຍອດຄົງຄ້າງຂອງພາກສ່ວນທີ່ກ່ຽວຂ້ອງທີ່ສຳຄັນ

ຍອດຄົງຄ້າງໃນວັນທີສິ້ນສຸດງວດທີ່ໄດ້ເຮັດລາຍການກັບພາກສ່ວນທີ່ກ່ຽວຂ້ອງດັ່ງລຸ່ມນີ້:

| | ກ່ອນການກວດສອບ<br>31 ມີນາ 2026<br>ລ້ານກີບ | ກວດສອບ<br>31 ທັນວາ 2025<br>ລ້ານກີບ |
|---|---|---|
| **ໜີ້ຕ້ອງຮັບຈາກທະນາຄານອື່ນ** | | |
| ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 1,800,119 | 2,066,859 |
| **ການລົງທຶນໃນຫລັກຊັບ** | | |
| ບໍລິສັດແມ່ | 17,279,320 | 16,541,682 |
| **ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ** | | |
| ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ | 322,870 | 300,300 |

**30. ບັນດາລາຍການກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)**

**4) ຄ່າຕອບແທນຜູ້ບໍລິຫານທີ່ສຳຄັນ**

ຜູ້ບໍລິຫານທີ່ສຳຄັນຂອງທະນາຄານລວມເຖິງ ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ. ຄ່າຕອບແທນທີ່ຈ່າຍ ແລະຄ້າງຈ່າຍສຳລັບຜູ້ບໍລິຫານສຳຄັນ ມີດັ່ງນີ້:

| | ກ່ອນການກວດສອບ<br>31 ມີນາ 2026<br>ລ້ານກີບ | ກ່ອນການກວດສອບ<br>31 ມີນາ 2025<br>ລ້ານກີບ |
|---|---|---|
| ເງິນເດືອນ ແລະຜົນປະໂຫຍດໄລຍະສັ້ນ | 2,279 | 1,841 |

**31. ກຳໄລຕໍ່ຮຸ້ນ**

ມູນຄ່າຂອງກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ຈາກຜົນຫານລະຫວ່າງ ກຳໄລຫຼັງຫັກອາກອນໃນງວດນີ້ທີ່ຄາດວ່າຈະຕ້ອງຈ່າຍໃຫ້ກັບຜູ້ຖືຮຸ້ນສາມັນ ຂອງທະນາຄານ ກັບຈຳນວນສະເລ່ຍຂອງຮຸ້ນສາມັນທີ່ອອກ ແລະຊຳລະແລ້ວພາຍໃນໄລຍະສາມເດືອນ.

ລາຍການດັ່ງລຸ່ມນີ້ສະແດງເຖິງຂໍ້ມູນ ທີ່ໃຊ້ເຂົ້າໃນການຄິດໄລ່ ກຳໄລຕໍ່ຮຸ້ນ.

| | ໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 31 ມີນາ 2026 | ໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 30 ມີນາ 2025 ປັບປຸງໃໝ່ | ໄລຍະສາມເດືອນ ຂອງໄຕມາດທີ I ສິ້ນສຸດວັນທີ 30 ມີນາ 2025 |
|---|---|---|---|
| ຈາກການດຳເນີນງານຕໍ່ເນື່ອງທີ່ເປັນຂອງຜູ້ຖືຮຸ້ນສາມັນ ຂອງທະນາຄານ (ລ້ານກີບ) | 328,830 | 148,416 | 148,416 |
| ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ໃຊ້ສຳລັບການຄິດໄລ່ ກຳໄລຕໍ່ຮຸ້ນ ພື້ນຖານ (ຮຸ້ນ) | 1,544,872,000 | 1,544,872,000 | 1,038,616,500 |
| ກຳໄລພື້ນຖານຕໍ່ຫຸ້ນທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງ ທະນາຄານ (ກີບ) | 213 | 96 | 143 |

## 32. ເງິນປັນຜົນ

**31 ມີນາ 2026**

ອີງຕາມມະຕິກອງປະຊຸມສາມັນຜູ້ຖືຫຸ້ນປະຈຳປີ 2025 ຂອງ ທຄຕລ, ໄດ້ມີການອະນຸມັດການຈ່າຍເງິນປັນຜົນ ສຳລັບປີທີ່ ສິ້ນສຸດວັນທີ 31 ທັນວາ 2025 ໃນອັດຕາ 200 ກີບຕໍ່ຫຸ້ນ, ລວມເປັນມູນຄ່າທັງໝົດ 308,974 ລ້ານກີບ (ອີງຕາມຈຳນວນຫຸ້ນທີ່ອອກຈຳໜ່າຍທັງໝົດ 1,544,872,000 ຫຸ້ນ). ໂດຍມີກຳນົດຈະຈ່າຍເງິນປັນຜົນໃນວັນທີ 15 ພຶດສະພາ 2026.

**2025**

ຫຼັງຈາກການແບ່ງຫຸ້ນທີ່ເກີດຂຶ້ນໃນວັນທີ 18 ກຸມພາ 2025 ເຊິ່ງເຮັດໃຫ້ຈຳນວນຫຸ້ນທີ່ອອກແລະຢູ່ໃນມືຜູ້ຖືຫຸ້ນເພີ່ມຈາກ 207,723,300 ຫຸ້ນ ເປັນ 1,038,616,500 ຫຸ້ນ, ການປະຊຸມສາມັນປະຈຳປີຂອງຜູ້ຖືຫຸ້ນໃນວັນທີ 30 ເມສາ 2025 ໄດ້ອະນຸມັດການຈ່າຍຜົນຕອບແທນປະຈຳປີຈາກກຳໄລສຸດທິສຳລັບປີບັນທຶກທີ່ສິ້ນສຸດໃນວັນທີ 31 ທັນວາ 2024.

ຜົນຕອບແທນຖືກປະກາດໄວ້ທີ່ 100 ກີບຕໍ່ຫຸ້ນ (ຕາມຈຳນວນຫຸ້ນຫຼັງການແບ່ງ), ລວມເປັນຈຳນວນເງິນ 103,862 ລ້ານກີບ ແລະ ໄດ້ຈ່າຍໃນວັນທີ 14 ພຶດສະພາ 2025.

## 33. ອັດຕາແລກປ່ຽນທີ່ນຳໃຊ້ກັບສະກຸນເງິນຕາຕ່າງປະເທດ ທຽບເທົ່າເງິນກີບລາວໃນທ້າຍງວດ 31 ມີນາ 2026

| | 31 ມີນາ 2026<br>ກີບ | 31 ທັນວາ 2025<br>ກີບ |
|---|---:|---:|
| ໂດລາ | 22,068.00 | 21,400.00 |
| ເອີໂຣ | 24,943.00 | 24,962.00 |
| ບາດໄທ | 668.90 | 681.63 |
| ປອນອັງກິດ | 28,580.00 | 28,507.00 |
| ເຢນຍີ່ປຸ່ນ | 137.01 | 137.20 |
| ໂດລາອົດສະຕາລີ | 14,926.00 | 14,282.00 |
| ຢວນຈີນ | 3,209.00 | 3,050.00 |